# [ໃສ່ຊື່ຂອງຜູ້ໃຫ້ບໍລິການທີ່ຢູ່ອາໄສ[1]]

# ແຈ້ງການກ່ຽວກັບສິດທິການຢູ່ອາໄສພາຍໃຕ້ກົດໝາຍວ່າດ້ວຍຄວາມຮຸນແຮງຕໍ່ແມ່ຍິງ[2]

## ເຖິງຜູ້ເຊົ່າ ແລະ ສະໝັກທຸກຄົນ

ກົດໝາຍວ່າດ້ວຍຄວາມຮຸນແຮງຕໍ່ແມ່ຍິງ (VAWA) ໃຫ້ການປົກປ້ອງສໍາລັບຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ການປົກປ້ອງຕາມກົດໝາຍ VAWA ບໍ່ພຽງແຕ່ມີໃຫ້ແກ່ແມ່ຍິງເທົ່ານັ້ນ, ແຕ່ມີໃຫ້ແກ່ທຸກຄົນຢ່າງເທົ່າທຽມກັນ ໂດຍບໍ່ສົນເລື່ອງເພດ, ລັກສະນະທາງເພດ ຫຼື ລົດສະນິຍົມທາງເພດ.[3] ກະຊວງທີ່ຢູ່ອາໄສ ແລະ ການພັດທະນາຕົວເມືອງຂອງສະຫະລັດ (HUD) ແມ່ນໜ່ວຍງານລັດຖະບານກາງທີ່ຕິດຕາມກວດກາວ່າ **[ໃສ່ຊື່ໂຄງການ ຫຼື ການຊ່ວຍເຫຼືອຄ່າເຊົ່າຢູ່ບ່ອນນີ້]** ໄດ້ປະຕິບັດຕາມກົດໝາຍ VAWA ແຈ້ງການນີ້ອະທິບາຍສິດທິຂອງທ່ານພາຍໃຕ້ກົດໝາຍ VAWA ແບບຟອມການຢັ້ງຢືນທີ່ HUD ອະນຸມັດໄດ້ຖືກຕິດຄັດມານໍາແຈ້ງການນີ້ ທ່ານສາມາດປະກອບແບບຟອມນີ້ເພື່ອສະແດງໃຫ້ເຫັນວ່າທ່ານເປັນ ຫຼື ເຄີຍເປັນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ, ແລະ ວ່າທ່ານຕ້ອງການໃຊ້ສິດທິຂອງທ່ານພາຍໃຕ້ກົດໝາຍ VAWA."

## ການປົກປ້ອງສໍາລັບຜູ້ສະໝັກ

ຖ້າທ່ານມີສິດໄດ້ຮັບການຊ່ວຍເຫຼືອພາຍໃຕ້ **[ໃສ່ຊື່ໂຄງການ ຫຼື ການຊ່ວຍເຫຼືອຄ່າເຊົ່າຢູ່ບ່ອນນີ້],** ທ່ານບໍ່ສາມາດຖືກປະຕິເສດການຮັບເຂົ້າ ຫຼື ຖືກປະຕິເສດການຊ່ວຍເຫຼືອ ເພາະວ່າທ່ານເປັນ ຫຼື ເຄີຍເປັນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ

---

[1] ແຈ້ງການນີ້ໃຊ້ຄໍາວ່າ HP ສໍາລັບຜູ້ໃຫ້ບໍລິການທີ່ຢູ່ອາໄສ ແຕ່ຜູ້ໃຫ້ບໍລິການຄວນໃສ່ຊື່ຂອງຕົນຢູ່ບ່ອນທີ່ໃຊ້ຄໍາວ່າ HP ກົດລະບຽບສະເພາະໂຄງການຂອງກະຊວງ HUD ລະບຸບຸກຄົນ ຫຼື ນິຕິບຸກຄົນທີ່ຮັບຜິດຊອບສໍາລັບການໃຫ້ແຈ້ງການກ່ຽວກັບສິດທິການຢູ່ອາໄສ

[2] ເຖິງແມ່ນກົດໝາຍຈະມີຊື່ແບບນີ້, ແຕ່ການປົກປ້ອງຂຕາມກົດໝາຍ VAWA ມີໃຫ້ແກ່ທຸກຄົນໂດຍບໍ່ສົນເລື່ອງເພດ, ລັກສະນະທາງເພດ ຫຼື ລົດສະນິຍົມທາງເພດ

[3] ຜູ້ໃຫ້ບໍລິການທີ່ຢູ່ອາໄສບໍ່ສາມາດເລືອກປະຕິບັດໂດຍອີງໃສ່ລັກສະນະທີ່ໄດ້ຮັບການປົກປ້ອງ ລວມທັງເຊື້ອຊາດ, ສີຜິວ, ຊາດກໍາເນີດ, ສາສະໜາ, ເພດ, ສະຖານະຄອບຄົວ, ຄວາມພິການ ຫຼື ອາຍຸໄດ້ ທີ່ຢູ່ອາໄສທີ HUD ໃຫ້ການຊ່ວຍເຫຼືອ ແລະ HUD ໃຫ້ປະກັນໄພ ຕ້ອງເຮັດໃຫ້ມີໃຫ້ແກ່ທຸກຄົນທີ່ມີສິດຢູ່ອາໄສໂດຍບໍ່ຄໍານຶງເຖິງລົດສະນິຍົມທາງເພດ, ລັກສະນະທາງເພດ ຫຼື ສະຖານະການແຕ່ງງານຕົວຈິງ ຫຼື ທີ່ຮັບຮູ້

**ການປົກປ້ອງສໍາລັບຜູ້ເຊົ່າ**

ຖ້າທ່ານກໍາລັງໄດ້ຮັບການຊ່ວຍເຫຼືອພາຍໃຕ້ **[ໃສ່ຊື່ໂຄງການ ຫຼື ການຊ່ວຍເຫຼືອຄ່າເຊົ່າຢູ່ບ່ອນນີ້]**, ທ່ານບໍ່ສາມາດຖືກປະຕິເສດການຊ່ວຍເຫຼືອ, ຖືກຢຸດເຊົາການເຂົ້າຮ່ວມ ຫຼື ຖືກໄລ່ອອກຈາກບ່ອນຢູ່ອາໄສທີ່ເຊົ່າຢູ່ຂອງທ່ານ ເພາະວ່າທ່ານເປັນ ຫຼື ເຄີຍເປັນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ

ນອກນັ້ນ, ຖ້າທ່ານ ຫຼື ບຸກຄົນທີ່ເປັນສະມາຊິກຂອງທ່ານເປັນ ຫຼື ເຄີຍເປັນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ຈາກສະມາຊິກໃດໜຶ່ງໃນຄົວເຮືອນຂອງທ່ານ ຫຼື ແຂກໃດໆກໍຕາມ, ທ່ານບໍ່ສາມາດຖືກປະຕິເສດການຊ່ວຍເຫຼືອຄ່າເຊົ່າ ຫຼື ສິດທິການຢູ່ອາໄສຂອງທ່ານພາຍໃຕ້ **[ໃສ່ຊື່ໂຄງການ ຫຼື ການຊ່ວຍເຫຼືອຄ່າເຊົ່າຢູ່ບ່ອນນີ້]** ພຽງແຕ່ອີງໃສ່ການເຄື່ອນໄຫວຜິດກົດໝາຍທີ່ກ່ຽວຂ້ອງໂດຍກົງກັບຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນນັ້ນເທົ່ານັ້ນ

ບຸກຄົນທີ່ເປັນສະມາຊິກໝາຍເຖິງຄູ່ສົມລົດ, ພໍ່ແມ່, ອ້າຍເອື້ອຍນ້ອງ ຫຼື ເດັກນ້ອຍ ຫຼື ບຸກຄົນທີ່ທ່ານເຮັດໜ້າທີ່ເປັນພໍ່ແມ່ ຫຼື ຜູ້ປົກຄອງ (ຕົວຢ່າງ: ບຸກຄົນທີ່ເປັນສະມາຊິກຢູ່ໃນຄວາມດູແລເບິ່ງແຍງ, ການຄຸ້ມຄອງ ຫຼື ການຄວບຄຸມຂອງທ່ານ); ຫຼື ບຸກຄົນ, ຜູ້ເຊົ່າ ຫຼື ຜູ້ຢູ່ອາໄສຢ່າງຖືກກົດໝາຍອື່ນໆທີ່ອາໄສຢູ່ໃນຄົວເຮືອນຂອງທ່ານ

**ການເອົາຜູ້ຂົ່ມເຫັງທາລຸນ ຫຼື ຜູ້ກະທໍາຜິດອອກຈາກຄົວເຮືອນ**

HP ອາດຈະແບ່ງ (ແບ່ງເປັນສອງສ່ວນ) ສັນຍາເຊົ່າຂອງທ່ານເພື່ອຂັບໄລ່ບຸກຄົນອອກຈາກຄົວເຮືອນ ຫຼື ຢຸດເຊົາການຊ່ວຍເຫຼືອບຸກຄົນຜູ້ທີ່ພົວພັນໃນການເຄື່ອນໄຫວທີ່ຜິດກົດໝາຍ (ຜູ້ຂົ່ມເຫັງທາລຸນ ຫຼື ຜູ້ກະທໍາຜິດ) ທີ່ກ່ຽວຂ້ອງໂດຍກົງກັບຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ

ຖ້າ HP ເລືອກເອົາຜູ້ຂົ່ມເຫັງທາລຸນ ຫຼື ຜູ້ກະທໍາຜິດອອກ, HP ບໍ່ສາມາດພາກສິດທິຂອງຜູ້ເຊົ່າທີ່ມີສິດຕໍ່ກັບເຮືອນເຊົ່ານັ້ນ ຫຼື ລົງໂທດຜູ້ເຊົ່າທີ່ເຫຼືອໄດ້ ຜູ້ຂົ່ມເຫັງທາລຸນ ຫຼື ຜູ້ກະທໍາຜິດທີ່ຖືກໄລ່ອອກແມ່ນຜູ້ເຊົ່າໜຶ່ງດຽວທີ່ມີສິດໄດ້ຮັບການຊ່ວຍເຫຼືອທີ່ກໍານົດໄວ້ພາຍໃຕ້ໂຄງການນັ້ນ, HP ຕ້ອງອະນຸຍາດໃຫ້ຜູ້ເຊົ່າຜູ້ທີ່ເປັນ ຫຼື ເຄີຍເປັນຜູ້ເຄາະຮ້າຍ ແລະ ສະມາຊິກອື່ນໃນຄົວເຮືອນຍັງຄົງຢູ່

ໃນເຮືອນເຊົ່ານັ້ນເປັນໄລຍະເວລາໃດໜຶ່ງເພື່ອສ້າງການມີສິດໄດ້ຮັບພາຍໃຕ້ໂຄງການນັ້ນ ຫຼື ພາຍໃຕ້ໂຄງການທີ່ຢູ່ອາໄສອື່ນຂອງ HUD ທີ່ໄດ້ຮັບການຄຸ້ມຄອງໂດຍກົດໝາຍ VAWA, ຫຼື ເພື່ອຊອກບ່ອນຢູ່ອາໄສອື່ນ

ໃນການເອົາຜູ້ຂົ່ມເຫັງທາລຸນ ຫຼື ຜູ້ກະທຳຜິດອອກຈາກຄົວເຮືອນ, HP ຕ້ອງປະຕິບັດຕາມລະບຽບຂັ້ນຕອນການໄລ່ອອກຂອງລັດຖະບານກາງ, ຂອງລັດ ແລະ ຂອງທ້ອງຖິ່ນ ເພື່ອແບ່ງສັນຍາເຊົ່າໃດໜຶ່ງ, HP ອາດຈະ, ແຕ່ບໍ່ຈຳເປັນຕ້ອງເຮັດກໍ່ໄດ້, ຮ້ອງຂໍໃຫ້ທ່ານສະໜອງເອກະສານ ຫຼື ການຢັ້ງຢືນກ່ຽວກັບເຫດການຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ

**ການຍ້າຍໄປຢູ່ເຮືອນເຊົ່າອື່ນ**

ຫຼັງຈາກການຮ້ອງຂໍຂອງທ່ານ, HP ອາດຈະອະນຸຍາດໃຫ້ທ່ານຍ້າຍໄປຢູ່ເຮືອນເຊົ່າອື່ນ, ໂດຍຂຶ້ນກັບການມີຢູ່ຂອງເຮືອນເຊົ່າອື່ນ ແລະ ສືບຕໍ່ຮັກສາການຊ່ວຍເຫຼືອຂອງທ່ານໄວ້ ເພື່ອອະນຸຍາດຄຳຮ້ອງຂໍ, HP ອາດຈະບອກໃຫ້ທ່ານສະໜອງເອກະສານທີ່ສະແດງວ່າທ່ານກຳລັງຮ້ອງຂໍຍ້າຍເນື່ອງຈາກເຫດການຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ຖ້າຄຳຮ້ອງຂໍແມ່ນການຂໍຍ້າຍສຸກເສີນ, ຜູ້ໃຫ້ບໍລິການທີ່ຢູ່ອາໄສອາດຈະບອກໃຫ້ທ່ານສົ່ງຄຳຮ້ອງຂໍເປັນລາຍລັກອັກສອນ ຫຼື ປະກອບແບບຟອມບ່ອນທີ່ທ່ານຢັ້ງຢືນວ່າທ່ານຕອບສະໜອງໄດ້ເກນເງື່ອນໄຂສຳລັບການຍ້າຍສຸກເສີນພາຍໃຕ້ກົດໝາຍ VAWA ເກນເງື່ອນໄຂແມ່ນ:

**(1) ທ່ານເປັນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ** ຖ້າຜູ້ໃຫ້ບໍລິການທີ່ຢູ່ອາໄສຂອງທ່ານບໍ່ມີເອກະສານຢັ້ງຢືນວ່າທ່ານເປັນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ, ຜູ້ໃຫ້ບໍລິການທີ່ຢູ່ອາໄສຂອງທ່ານອາດຈະຮ້ອງຂໍເອົາເອກະສານດັ່ງກ່າວທີ່ອະທິບາຍໄວ້ໃນຫົວຂໍ້ເອກະສານຂ້າງລຸ່ມນຳທ່ານ

**(2) ທ່ານຮ້ອງຂໍການຍ້າຍສຸກເສີນຢ່າງຈະແຈ້ງ** ຜູ້ໃຫ້ບໍລິການທີ່ຢູ່ອາໄສອາດຈະເລືອກຮຽກຮ້ອງໃຫ້ທ່ານສົ່ງແບບຟອມ ຫຼື ອາດຈະຍອມຮັບຄຳຮ້ອງຂໍເປັນລາຍລັກອັກສອນ ຫຼື ແບບປາກເປົ່າອື່ນກໍ່ໄດ້

**(3) ທ່ານເຊື່ອຢ່າງມີເຫດຜົນວ່າທ່ານມີໄພອັນຕະລາຍທີ່ກຳລັງຈະເກີດຂຶ້ນຈາກຄວາມຮຸນແຮງເພີ່ມເຕີມຖ້າທ່ານຍັງຄົງຢູ່ໃນເຮືອນເຊົ່າ ຫຼື ບ່ອນຢູ່ປັດຈຸບັນນັ້ນ** ນີ້ໝາຍຄວາມວ່າທ່ານມີເຫດຜົນໃຫ້ຢ້ານວ່າຖ້າທ່ານບໍ່ໄດ້ຮັບການຍ້າຍ ທ່ານອາດຈະປະສົບກັບຄວາມຮຸນແຮງໃນອະນາຄົດອັນໃກ້ໆ

**ຫຼື**

**ທ່ານແມ່ນຜູ້ເຄາະຮ້າຍຈາກການລ່ວງລະເມີດທາງເພດ ແລະ ການລ່ວງລະເມີດເກີດຂຶ້ນໃນສະຖານທີ່ນັ້ນໃນລະຫວ່າງໄລຍະ 90 ວັນຕາມເວລາປະຕິທິນກ່ອນທີ່ທ່ານຈະຮ້ອງຂໍການຍ້າຍ** ຖ້າທ່ານແມ່ນຜູ້ເຄາະຮ້າຍຈາກການລ່ວງລະເມີດທາງເພດ, ນອກຈາກການມີສິດໄດ້ຮັບການຍ້າຍສຸກເສີນເນື່ອງຈາກທ່ານເຊື່ອຢ່າງມີເຫດຜົນວ່າທ່ານມີໄພອັນຕະ ລາຍທີ່ຈະເກີດຂຶ້ນຈາກຄວາມຮຸນແຮງເພີ່ມເຕີມຖ້າທ່ານຍັງຄົງຢູ່ໃນຫ້ອງເຊົ່າຫຼືບ່ອນຢູ່ຂອງທ່ານ, ທ່ານອາດຈະມີສິດໄດ້ຮັບການຍ້າຍສຸກເສີນຖ້າການລ່ວງລະເມີດທາງເພດເກີດຂຶ້ນໃນສະຖານທີ່ຂອງອະສັງຫາລິມະຊັບທີ່ທ່ານກຳລັງຮ້ອງຂໍການຍ້າຍຂອງທ່ານ ແລະ ການລ່ວງລະເມີດນັ້ນໄດ້ເກີດຂຶ້ນພາຍໃນໄລຍະ 90 ວັນຕາມເວລາປະຕິທິນກ່ອນທີ່ທ່ານຈະຮ້ອງຂໍການຍ້າຍຢ່າງຈະແຈ້ງ

HP ຈະຮັກສາເປັນຄວາມລັບສຳລັບຄຳຮ້ອງຂໍການຍ້າຍສຸກເສີນໂດຍຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ, ແລະ ສະຖານທີ່ຂອງການຍ້າຍໂດຍຜູ້ເຄາະຮ້າຍດັ່ງກ່າວ ແລະ ຄອບຄົວຂອງເຂົາເຈົ້າ

ແຜນການຍ້າຍສຸກເສີນຂອງ HP ໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບການຍ້າຍສຸກເສີນ ແລະ HP ຕ້ອງເຮັດໃຫ້ສຳເນົາຂອງແຜນການຍ້າຍສຸກເສີນຂອງຕົນມີໃຫ້ແກ່ທ່ານຖ້າທ່ານຂໍເບິ່ງມັນ

**ເອກະສານທີ່ສະແດງວ່າທ່ານເປັນ ຫຼື ເຄີຍເປັນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ**

HP ສາມາດ, ແຕ່ບໍ່ຈຳເປັນຕ້ອງເຮັດກໍໄດ້, ຮ້ອງຂໍໃຫ້ທ່ານສະໜອງເອກະສານເພື່ອ "ຢັ້ງຢືນ" ວ່າທ່ານເປັນ ຫຼື ເຄີຍເປັນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ຄຳຮ້ອງຂໍດັ່ງກ່າວຈາກ HP ຕ້ອງເປັນລາຍລັກອັກສອນ ແລະ HP ຕ້ອງໃຫ້ເວລາແກ່ທ່ານຢ່າງໜ້ອຍ 14 ວັນເຮັດວຽກ (ບໍ່ນັບວັນ

ເສົາ, ວັນອາທິດ ແລະ ວັນພັກລັດຖະ ບານກາງ) ນັບຈາກມື້ທີ່ທ່ານໄດ້ຮັບຄຳຮ້ອງຂໍໃຫ້ສະໜອງ ເອກະສານດັ່ງກ່າວ  HP ອາດຈະ, ແຕ່ບໍ່ຈຳເປັນຕ້ອງເຮັດກໍໄດ້, ຂະຫຍາຍກຳນົດເວລາການສົ່ງ ເອກະສານຫຼັງຈາກຄຳຮ້ອງຂໍຂອງທ່ານ

ທ່ານສາມາດໃຫ້ໜຶ່ງໃນສິ່ງຕໍ່ໄປນີ້ເປັນເອກະສານໃຫ້ແກ່ HP  ທ່ານສາມາດເລືອກໄດ້ວ່າຈະສົ່ງອັນ ໃດໃນສິ່ງຕໍ່ໄປນີ້ຖ້າ HP ຂໍໃຫ້ທ່ານສົ່ງເອກະສານທີ່ສະແດງວ່າທ່ານເປັນ ຫຼື ເຄີຍເປັນຜູ້ເຄາະຮ້າຍ ຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງ ເພດ ຫຼື ການຕິດຕາມກໍ່ກວນ

- ແບບຟອມການຢັ້ງຢືນຄົບຖ້ວນທີ່ HUD ອະນຸມັດທີ່ HP ເອົາໃຫ້ທ່ານພ້ອມກັບແຈ້ງການນີ້ ທີ່ບັນທຶກເຫດການຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ແບບຟອມຈະຖາມເອົາຊື່ຂອງທ່ານ, ວັນທີ, ເວລາ ແລະ ສະຖານທີ່ເກີດເຫດການຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງ ໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ, ແລະ ລາຍ ລະອຽດຂອງເຫດການ  ແບບຟອມການຢັ້ງຢືນມີບ່ອນໃຫ້ລວມເອົາຊື່ຂອງຜູ້ຂົ່ມເຫັງ ທາລຸນ ຫຼື ຜູ້ກະທຳຜິດຖ້າຮູ້ຊື່ຂອງຜູ້ຂົ່ມເຫັງທາລຸນ ຫຼື ຜູ້ກະທຳຜິດ ແລະ ມັນປອດໄພໃນ ການບອກຊື່ນັ້ນ
- ບັນທຶກຂອງໜ່ວຍງານບັງຄັບໃຊ້ກົດໝາຍ, ສານ ຫຼື ໜ່ວຍງານບໍລິຫານຂັ້ນລັດຖະບານ ກາງ, ລັດ, ປະຈຳຊົນເຜົ່າ, ເຂດດິນແດນ ຫຼື ທ້ອງຖິ່ນທີ່ບັນທຶກເຫດການຄວາມຮຸນແຮງໃນ ຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການ ຕິດຕາມກໍ່ກວນ.  ຕົວຢ່າງຂອງບັນທຶກດັ່ງກ່າວລວມມີລາຍງານຂອງຕຳຫຼວດ, ຄຳສັ່ງປົກ ປ້ອງ ແລະ ຄຳສັ່ງຫ້າມກະທຳການ ແລະ ອື່ນໆອີກ
- ຄຳຖະແຫຼງເຊິ່ງທ່ານຕ້ອງເຊັນຊື່ພ້ອມກັບລາຍເຊັນຂອງພະນັກງານ, ຕົວແທນ ຫຼື ອາສາສະ ໝັກຂອງຜູ້ໃຫ້ບໍລິການຜູ້ເຄາະຮ້າຍ, ທະນາຍຄວາມ, ຜູ້ຊ່ຽວຊານການແພດ ຫຼື ຜູ້ຊ່ຽວຊານ ສຸຂະພາບຈິດ (ທັງໝົດລວມກັນເອີ້ນວ່າ “ຜູ້ຊ່ຽວຊານ”) ຜູ້ທີ່ທ່ານຂໍຄວາມຊ່ວຍເຫຼືອຈາກ ໃນການແກ້ໄຂຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການ ລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ, ຫຼື ຜົນກະທົບຂອງການຂົ່ມເຫັງທາລຸນ, ແລະ ໂດຍມີການຢັ້ງຢືນຂອງຜູ້ຊ່ຽວຊານທີ່ເລືອກໂດຍທ່ານພາຍໃຕ້ບົດລົງໂທດຂອງການ

ເວົ້າຄວາມເທັດວ່າຜູ້ກ່ຽວເຊື່ອວ່າເຫດການ ຫຼື ບັນດາເຫດການຄວາມຮຸນແຮງໃນຄອບຄົວ , ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມ ກ່ອນແມ່ນເຫດຜົນສຳລັບການປົກປ້ອງ

- ຄຳຖະແຫຼງ ຫຼື ຫຼັກຖານອື່ນໃດໆກໍຕາມທີ່ HP ເຫັນດີຍອມຮັບເອົາ

ຖ້າທ່ານບໍ່ສາມາດ ຫຼື ປະຕິເສດບໍ່ໃຫ້ໜຶ່ງໃນເອກະສານເຫຼົ່ານີ້ພາຍໃນ 14 ວັນເຮັດວຽກ, HP ບໍ່ຈຳເປັນຕ້ອງໃຫ້ການປົກປ້ອງຕ່າງໆທີ່ປະກອບມີໃນແຈ້ງການນີ້ແກ່ທ່ານ

ຖ້າ HP ໄດ້ຮັບຫຼັກຖານທີ່ຂັດແຍ່ງກັນທີ່ເຫດການຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກ່ອນ ໄດ້ຖືກກະທຳແທ້ຫຼືບໍ່ (ເຊັ່ນວ່າ ແບບຟອມການຢັ້ງຢືນຈາກສະມາຊິກສອງ ຫຼື ຫຼາຍຄົນຂອງຄົວເຮືອນ ເຊິ່ງແຕ່ລະຄົນອ້າງເປັນຜູ້ເຄາະຮ້າຍ ແລະ ລະບຸຊື່ຂອງໜຶ່ງ ຫຼື ຫຼາຍຄົນອື່ນໃນຄົວເຮືອນຮ້ອງທຸກນັ້ນເປັນຜູ້ຂົ່ມເຫັງທາລຸນ ຫຼື ຜູ້ກະທຳຜິດ), HP ມີສິດຮ້ອງຂໍໃຫ້ທ່ານສະໜອງເອກະສານຈາກພາກສ່ວນທີສາມພາຍໃນ 30 ວັນຕາມເວລາປະຕິທິນເພື່ອແກ້ໄຂການຂັດແຍ່ງນັ້ນ ຖ້າທ່ານບໍ່ສາມາດ ຫຼື ປະຕິເສດບໍ່ໃຫ້ເອກະສານຈາກພາກສ່ວນທີສາມໃນກໍລະນີທີ່ມີຫຼັກຖານຂັດແຍ່ງກັນ, HP ບໍ່ຈຳເປັນຕ້ອງໃຫ້ການປົກປ້ອງຕ່າງໆທີ່ປະກອບມີໃນແຈ້ງການນີ້ແກ່ທ່ານ

**ການຮັກສາຄວາມລັບ**

HP ຕ້ອງຮັກສາຂໍ້ມູນຕ່າງໆທີ່ທ່ານສະໜອງ ທີ່ກ່ຽວຂ້ອງກັບການໃຊ້ສິດທິຂອງທ່ານພາຍໃຕ້ກົດໝາຍ VAWA ລວມທັງຂໍ້ເທັດຈິງທີ່ວ່າທ່ານກຳລັງໃຊ້ສິດທິຂອງທ່ານພາຍໃຕ້ກົດໝາຍ VAWA ນີ້ເປັນຄວາມລັບ

HP ຕ້ອງບໍ່ອະນຸຍາດໃຫ້ບຸກຄົນທີ່ຄຸ້ມຄອງການຊ່ວຍເຫຼືອ ຫຼື ການບໍລິການອື່ນໃນນາມຕາງໜ້າໃຫ້ HP (ຕົວຢ່າງ ພະນັກງານ ແລະ ຜູ້ຮັບເໝົາ) ມີການເຂົ້າເຖິງຂໍ້ມູນລັບ ຍົກເວັ້ນເພື່ອເຫດຜົນທີ່ຮຽກຮ້ອງໂດຍສະເພາະໃຫ້ບຸກຄົນເຫຼົ່ານີ້ມີການເຂົ້າເຖິງຂໍ້ມູນນີ້ອີງຕາມກົດໝາຍລັດຖະບານກາງ, ລັດ ຫຼື ທ້ອງຖິ່ນທີ່ນຳໃຊ້

HP ຕ້ອງບໍ່ປ້ອນຂໍ້ມູນຂອງທ່ານເຂົ້າໃສ່ຖານຂໍ້ມູນທີ່ໃຊ້ຮ່ວມກັນ ຫຼື ເປີດເຜີຍຂໍ້ມູນຂອງທ່ານກັບບຸກຄົນ ຫຼື ນິຕິບຸກຄົນອື່ນໃດໆ ແນວໃດກໍຕາມ, HP ອາດຈະເປີດເຜີຍຂໍ້ມູນໄດ້ໂດຍມີເງື່ອນໄຂວ່າ:

- ທ່ານໃຫ້ການອະນຸຍາດເປັນລາຍລັກອັກສອນແກ່ HP ເພື່ອໃຫ້ເປີດເຜີຍຂໍ້ມູນໂດຍມີການຈຳກັດເວລາ
- HP ຈຳເປັນຕ້ອງໃຊ້ຂໍ້ມູນດັ່ງກ່າວໃນການດຳການໄລ່ອອກ ຫຼື ການຢຸດເຊົາ ເຊັ່ນວ່າ ເພື່ອຂັບໄລ່ຜູ້ຂົ່ມເຫັງທາລຸນ ຫຼື ຜູ້ກະທຳຜິດອອກໄປ ຫຼື ຢຸດເຊົາຜູ້ຂົ່ມເຫັງທາລຸນ ຫຼື ຜ ູ້ກະທຳຜິດຈາກການຊ່ວຍເຫຼືອພາຍໃຕ້ໂຄງການນີ້
- ກົດໝາຍກຳນົດໃຫ້ HP ຫຼື ເຈົ້າຂອງເຮືອນຂອງທ່ານເປີດເຜີຍຂໍ້ມູນນັ້ນ

VAWA ບໍ່ຈຳກັດໜ້າທີ່ຂອງ HP ໃນການປະຕິບັດຕາມຄຳສັ່ງສານກ່ຽວກັບການເຂົ້າເຖິງ ຫຼື ການຄວບຄຸມຊັບສິນນັ້ນ ນີ້ລວມມີຄຳສັ່ງທີ່ອອກເພື່ອປົກປ້ອງຜູ້ເຄາະຮ້າຍ ແລະ ຄຳສັ່ງທີ່ແບ່ງຊັບສິນລະຫວ່າງສະມາຊິກຄົວເຮືອນ ໃນກໍລະນີທີ່ຄອບຄົວແຍກກັນ

**ເຫດຜົນທີ່ຜູ້ເຊົ່າທີ່ມີສິດສຳລັບສິດການຢູ່ອາໄສພາຍໃຕ້ກົດໝາຍ VAWA ອາດຈະຖືກໄລ່ອອກ ຫຼື ການຊ່ວຍເຫຼືອາດຈະຖືກຢຸດເຊົາ**

ທ່ານສາມາດຖືກໄລ່ອອກ ແລະ ການຊ່ວຍເຫຼືອຂອງທ່ານສາມາດຖືກຢຸດເຊົາໄດ້ເນື່ອງຈາກການລະເມີດສັນຍາເຊົ່າທີ່ຮ້າຍແຮງ ຫຼື ຊ້ຳກັນຫຼາຍຄັ້ງທີ່ບໍ່ກ່ຽວຂ້ອງກັບຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນທີ່ກະທຳຕໍ່ກັບທ່ານ  ແນວໃດກໍຕາມ, HP ບໍ່ສາມາດບັງຄັບໃຫ້ຜູ້ເຊົ່າຜູ້ທີ່ເປັນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ປະຕິບັດຕາມຊຸດກົດລະບຽບທີ່ເຂັ້ມງວດກວ່າທີ່ມັນນຳໃຊ້ກັບຜູ້ເຊົ່າທີ່ບໍ່ແມ່ນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນໄດ້

ການປົກປ້ອງທີ່ອະທິບາຍໄວ້ໃນແຈ້ງການນີ້ອາດຈະບໍ່ນຳໃຊ້ ແລະ ທ່ານສາມາດຖືກໄລ່ອອກ ແລະ ການຊ່ວຍເຫຼືອຂອງທ່ານຖືກຢຸດເຊົາ ຖ້າ HP ສາມາດສະແດງໃຫ້ເຫັນວ່າການບໍ່ໄລ່ທ່ານອອກ ຫຼື ການບໍ່ຢຸດເຊົາການຊ່ວຍເຫຼືອຂອງທ່ານຈະເຮັດໃຫ້ມີອັນຕະລາຍທາງວັດຖຸຕົວຈິງທີ່:

1) ຈະເກີດຂຶ້ນພາຍໃນໄລຍະເວລາໃກ້ໆ ແລະ

2) ອາດຈະເຮັດໃຫ້ເກີດເສຍຊີວິດ ຫຼື ອັນຕະລາຍທາງຮ່າງກາຍທີ່ຮ້າຍແຮງຕໍ່ກັບຜູ້ເຊົ່າຄົນອື່ນ ຫຼື ຜູ້ທີ່ເຮັດວຽກໃນອະສັງຫາລິມະຊັບນັ້ນ

ຖ້າ HP ສາມາດສະແດງໃຫ້ເຫັນສິ່ງຂ້າງເທິງ, HP ຄວນຢຸດເຊົາການຊ່ວຍເຫຼືອຂອງທ່ານ ຫຼື ໄລ່ທ່ານອອກຈາກບ່ອນເຊົ່າ ພຽງແຕ່ຖ້າບໍ່ມີການດຳເນີນການອື່ນທີ່ສາມາດເຮັດໄດ້ເພື່ອຫຼຸດຜ່ອນ ຫຼື ກຳຈັດໄພອັນຕະລາຍນັ້ນ

**ກົດໝາຍອື່ນ ໆ**

VAWA ບໍ່ປ່ຽນແທນກົດໝາຍຂອງລັດຖະບານກາງ, ລັດ ຫຼື ທ້ອງຖິ່ນໃດໆທີ່ໃຫ້ການປົກປ້ອງທີ່ດີກວ່າສຳລັບຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ທ່ານອາດຈະມີສິດໄດ້ຮັບການປົກປ້ອງດ້ານທີ່ຢູ່ອາໄສເພີ່ມເຕີມສຳລັບຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ພາຍໃຕ້ກົດໝາຍອື່ນຂອງລັດຖະບານກາງ ເຊັ່ນດຽວກັບພາຍໃຕ້ກົດໝາຍຂອງລັດ ແລະ ທ້ອງຖິ່ນ

**ການບໍ່ປະຕິບັດຕາມຂໍ້ກຳນົດຂອງແຈ້ງການນີ້**

ທ່ານສາມາດລາຍງານການລະເມີດສິດທິເຫຼົ່ານີ້ໂດຍຜູ້ໃຫ້ບໍລິການທີ່ຢູ່ອາໄສທີ່ແຈ້ງການນີ້ຄວບຄຸມ ແລະ ຂໍການຊ່ວຍເຫຼືອເພີ່ມເຕີມໄດ້ຖ້າຈຳເປັນ ໂດຍການຕິດຕໍ່ ຫຼື ຍື່ນການຮ້ອງຮຽນນຳ **[ໃສ່ຂໍ້ມູນຕິດຕໍ່ສຳລັບໜ່ວຍງານໄກ່ເກ່ຍແກ້ໄຂ ຖ້າກ່ຽວຂ້ອງ]** ຫຼື **[ໃສ່ຫ້ອງການພາກສະໜາມຂອງ HUD]**.

**ສຳລັບຂໍ້ມູນເພີ່ມເຕີມ**

ທ່ານສາມາດເບິ່ງສຳເນົາກົດລະບຽບ VAWA ສຸດທ້າຍຂອງ HUD ໄດ້ຢູ່ **[ໃສ່ລິ້ງເຊື່ອມໂຍງທະບຽນລັດຖະບານກາງ]**

ນອກນັ້ນ, HP ຕ້ອງເຮັດໃຫ້ສຳເນົາກົດລະບຽບ VAWA ຂອງ HUD ມີໃຫ້ແກ່ທ່ານຖ້າທ່ານຮ້ອງຂໍເບິ່ງພວກມັນ

ສຳລັບຄຳຖາມກ່ຽວກັບ VAWA, ກະລຸນາຕິດຕໍ່ **<u>[ໃສ່ຊື່ຂອງໂຄງການ ຫຼື ຂໍ້ມູນຕິດຕໍ່ການຊ່ວຍເຫຼືອຄ່າເຊົ່າທີ່ສາມາດຕອບຄຳຖາມຕ່າງໆກ່ຽວກັບ VAWA ໄດ້]</u>**

ສຳລັບຄວາມຊ່ວຍເຫຼືອກ່ຽວກັບຄວາມສຳພັນທີ່ທາລຸນ, ທ່ານສາມາດໂທຫາສາຍດ່ວນຄວາມຮຸນແຮງໃນຄອບຄົວແຫ່ງຊາດທີ່ເບີ 1-800-799-7233 ຫຼື ເບີ 1-800-787-3224 (TTY) ສຳລັບບຸກຄົນທີ່ມີຄວາມບົກຜ່ອງດ້ານການໄດ້ຍິນ ທ່ານຍັງສາມາດຕິດຕໍ່ຫາ **[ໃສ່ຂໍ້ມູນຕິດຕໍ່ສຳລັບອົງການທ້ອງຖິ່ນທີ່ກ່ຽວຂ້ອງ]** ໄດ້

ສຳລັບຜູ້ເຊົ່າຜູ້ທີ່ເປັນ ຫຼື ເຄີຍເປັນຜູ້ເຄາະຮ້າຍຂອງການຕິດຕາມກໍ່ກວນທີ່ຊອກຫາຄວາມຊ່ວຍເຫຼືອສາມາດເຂົ້າຫາສູນແຫຼ່ງຊ່ວຍເຫຼືອເລື່ອງການຕິດຕາມກໍ່ກວນຂອງສູນແຫ່ງຊາດສຳລັບຜູ້

ເຄາະຮ້າຍຈາກອາຊະຍາກຳໄດ້ທີ່ https://www.victimsofcrime.org/our-programs/stalking-resource-center

ສຳລັບຄວາມຊ່ວຍເຫຼືອກ່ຽວກັບການລ່ວງລະເມີດທາງເພດ, ທ່ານສາມາດຕິດຕໍ່ຫາ **[ໃສ່ຂໍ້ມູນຕິດຕໍ່ສຳລັບອົງການທີ່ກ່ຽວຂ້ອງ]**

ຜູ້ເຄາະຮ້າຍຂອງການຕິດຕາມກ່ອນທີ່ຊອກຫາຄວາມຊ່ວຍເຫຼືອສາມາດຕິດຕໍ່ຫາ **[ໃສ່ຂໍ້ມູນຕິດຕໍ່ສຳລັບອົງການທີ່ກ່ຽວຂ້ອງ]**

**ເອກະສານຕິດຄັດ**: ແບບຟອມການຢັ້ງຢືນ HUD-5382 **[ແບບຟອມທີ່ໄດ້ຮັບອະນຸມັດສຳລັບໂຄງການນີ້ທີ່ຈະຖືກລວມເອົາມີ]**